# ວິທີນຳໃຊ້ Handtalklao.org

ເວັບໄຊ handtalklao.org ເປັນເວັບໄຊທີ່ອອກແບບມາໃຫ້ຮອງຮັບການເຂົ້າເຖິງ ໃນຫລາຍອຸປະກອນ ເຊິ່ງ ເມື່ອທ່ານເຂົ້າສູ່ເວັບໄຊ ທ່ານຈະພໍ້ຮູບແບບທີ່ແຕກຕ່າງອອກໄປຂຶ້ນກັບອຸປະກອນທີ່ທ່ານນຳໃຊ້ ເຊິ່ງມີ 3 ຮູບ ແບບຫລັກດັ່ງນີ້:

- ເຂົ້າຜ່ານຄອມພິວເຕີ
- ເຂົ້າຜ່ານແທັບເລັດ
- ເຂົ້າຜ່ານໂທລະສັບມືຖື

ເມື່ອທ່ານເຂົ້າສູ່ເວັບໄຊ Handtalklao.org ທ່ານຈະພົບກັບລາຍການຫລັກ 4 ລາຍການປະກອບມີ:

1. ຫນ້າຫລັກ: ເປັນຫນ້າທີ່ຈະສະແດງທຸກຄັ້ງທີ່ທ່ານເລີ່ມເຂົ້າສູ່ເວັບໄຊ ເຊິ່ງຈະມີລາຍລະອຽດໂດຍຫຍໍ້ກ່ຽວກັບເວັບໄຊ ແລະວິທີການນຳໃຊ້ເບື້ອງຕົ້ນ
2. ຫມວດຄຳສັບ: ເປັນຫນ້າລາຍການ ເຂົ້າເຖິງເນື້ອຫາຫລັກ ຂອງເວັບໄຊ ເຊິ່ງແບ່ງເປັນຫມວດຫມູ່ຄຳສັບໄວ້ໃຫ້ຜູ້ໃຊ້ ເຂົ້າໄປເລືອກໃຊ້ໄດ້ສະດວກ
3. ຕິດຕໍ່: ເປັນຫນ້າສະແດງຂໍ້ມູນຕິດຕໍ່ກັບທີມງານພັດທະນາ ເວັບໄຊ Handtalklao.org
4. ກ່ຽວກັບ Hand Talk: ເປັນຫນ້າສະແດງລາຍລະອຽດ ຄວາມເປັນມາທັງຫມົດຂອງເວັບໄຊ Handtalklao.org



ເມື່ອທ່ານຕ້ອງການເປີດເບິ່ງພາສາມືໃນເວັບໄຊ Handtalklao.org ແມ່ນປະຕິບັດຕາມຂັ້ນຕອນລຸ່ມນີ້:

1. ກ່ອນອື່ນໃຫ້ທ່ານກົດປຸ່ມ "ຫມວດຄຳສັບ" ລະບົບຈະສະແດງລາຍການຫມວດຄ□າສັບທັງຫມົດທີ່ມີອອກມາ




2. ຈາກນັ້ນເລືອກຫມວດຄຳສັບທີ່ທ່ານຕ້ອງການເບິ່ງ ແລ້ວລະບົບຈະສະແດງຄຳສັບແລະປະໂຫຍກຕ່າງໆໃນຫມວດທີ່ທ່ານເລືອກອອກມາ



3. ຈາກນັ້ນເລືອກຄຳສັບຫລືປະໂຫຍກທີ່ທ່ານຕ້ອງການ ລະບົບກໍຈະສະແດງຜົນວິດີໂອ ແລະ ຫລິ້ນແບບອັດຕະໂນມັດ




ຂໍ້ມູນເພີ່ມເຕີມ http://handtalklao.org

# ໂດຍ

ບໍລິສັດ ລາວໄອທີ ພັດທະນາ ຈຳກັດ

(LaoITDev Co.,ltd)

http://laoitdev.com